ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງແຜນການ ແລະ ການລົງທຶນ
ຫ້ອງການ

ເລກທີ: 0298/ກຜທ.ຫກ3
ນະຄອນຫຼວງວຽງຈັນ, ວັນທີ: 03 ກຸມພາ 2025

# ໜັງສືເຊີນ

ເຖິງ: ບັນດາບໍລິສັດ, ຫ້າງຮ້ານ ແລະຜູ້ປະກອບການ ກ່ຽວກັບບໍລິການບໍາລຸງຮັກສາ ແລະສ້ອງແປງພາຫະນະ(ລົດ).

ເລື່ອງ: ເຊີນເຂົ້າຮ່ວມແຂ່ງຂັນປະມູນສໍາລັບການບໍລິການບໍາລຸງຮັກສາ ແລະສ້ອມແປງພາຫະນະ(ລົດ) ໃຫ້ແກ່ ກະຊວງແຜນການ ແລະການລົງທຶນ ປີ **2025.**

- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະການເຄື່ອນໄຫວຂອງຫ້ອງການ ກະຊວງແຜນການ ແລະການລົງທຶນ ສະບັບເລກທີ 0234/ກຜທ, ລົງວັນທີ 02 ກຸພາ 2022;
- ອີງຕາມ ຂໍ້ກໍານົດຂອງກົດໝາຍ ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017;
- ອີງຕາມ ຂໍ້ຕົກລົງແຕ່ງຕັ້ງຄະນະຮັບຜິດຊອບວຽກງານຈັດຊື້-ຈັດຈ້າງດ້ວຍງົບປະມານຂອງລັດປະຈໍາປີ 2025, ສະບັບເລກທີ 3067/ກຜທ, ລົງວັນທີ 28 ພະຈິກ 2024.

ຫ້ອງການ ກະຊວງແຜນການ ແລະການລົງທຶນ ຂໍຖືເປັນກຽດເຊີນ ບັນດາບໍລິສັດ, ຫ້າງ/ຮ້ານ ແລະຜູ້ປະກອບການກ່ຽວກັບການບໍລິການບໍາລຸງຮັກສາ ແລະສ້ອມແປງພາຫະນະ(ລົດ) ຜູ້ທີ່ມີຄວາມສົນໃຈເຂົ້າມາຮ່ວມປະມູນ ເພື່ອມາບໍລິການບໍາລຸງຮັກສາ ແລະສ້ອມແປງພາຫະນະ(ລົດ) ໃຫ້ແກ່ ກະຊວງແຜນການ ແລະການລົງທຶນ ປະຈໍາປີ 2025, ເຊິ່ງມີລາຍລະອຽດ ແລະເງື່ອນໄຂດັ່ງນີ້:

1. ກະຊວງແຜນການ ແລະການລົງທຶນ ໄດ້ຮັບອະນຸມັດງົບປະມານຂອງລັດ ປະຈໍາປີ 2025, ເພື່ອດໍາເນີນການຈັດຊື້ ແລະຈັດຈ້າງການບໍລິການໃຫ້ແກ່ ກະຊວງແຜນການ ແລະການລົງທຶນ ດ້ວຍການດໍາເນີນການປະມູນແບບເປີດກວ້າງ;
2. ກະຊວງແຜນການ ແລະການລົງທຶນ ຈຶ່ງຂໍເຊີນບັນດາບໍລິສັດ, ຫ້າງ/ຮ້ານ ທີ່ສົນໃຈ ແລະຜູ້ປະກອບການ ກ່ຽວກັບການບໍລິການບໍາລຸງຮັກສາ ແລະສ້ອມແປງພາຫະນະ(ລົດ), ຜູ້ທີ່ມີເງື່ອນໄຂຄົບຖ້ວນ ເຂົ້າມາຍື່ນການປະມູນດ້ວຍການປະມູນແບບເປີດກວ້າງ ທີ່ໄດ້ກໍານົດໄວ້ຢູ່ໃນກົດໝາຍ ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017;
3. ການປະມູນຄັ້ງນີ້ ແມ່ນເປີດກວ້າງໃຫ້ທຸກໆບໍລິສັດ, ຫ້າງ/ຮ້ານ ຂອງນິຕິບຸກຄົນພາຍໃນ ທີ່ດໍາເນີນທຸລະກິດຢູ່ໃນນະຄອນຫຼວງວຽງຈັນ, ມີໃບທະບຽນວິສາຫະກິດ, ມີເລກປະຈໍາຕົວເສຍອາກອນ ແລະໃບຢັ້ງຢືນການປະຕິບັດພັນທະພາສີ, ອາກອນ ຖືກຕ້ອງຕາມລະບຽບ ແລະກົດໝາຍ;

4. ບໍລິສັດ, ຫ້າງ/ຮ້ານ ແລະຜູ້ປະກອບການກ່ຽວກັບ ການບໍລິການບຳລຸງຮັກສາ ແລະສ້ອມແປງພາຫະນະ (ລົດ) ຜູ້ທີ່ມີຄວາມສົນໃຈສາມາດຕິດຕໍ່ພົວພັນ ຊື້ເອກະສານປະມູນຄົບຊຸດໄດ້ທີ່ພະແນກບໍລິຫານ ແລະພິທີການ ຫ້ອງການ ກະຊວງແຜນການ ແລະການລົງທຶນ (ໂທລະສັບ: 020 55514536 ແລະ 020 55444221) ສຳນັກງານຕັ້ງຢູ່ຖະໜົນສຸພານຸວົງ, ບ້ານສີຖານເໜືອ, ເມືອງສີໂຄດຕະບອງ, ນະຄອນຫຼວງວຽງຈັນ. ໃນໂມງລັດຖະການ 8:00-12:00 ໂມງ ແລະ 13:00-16:00 ໂມງ, ເລີ່ມຂາຍຊອງ ປະມູນແຕ່ວັນທີ 03 ກຸມພາ 2025 ເປັນຕົ້ນໄປ ຈົນຮອດວັນທີ 18 ກຸມພາ 2025 ລາຄາຊອງປະມູນ ຊອງລະ 500,000 ກີບ (ຫ້າແສນກີບຖ້ວນ) ຈຳນວນເງິນດັ່ງກ່າວນີ້ຈະບໍ່ມີການສົ່ງຄືນ;
5. ກຳນົດສົ່ງຊອງປະມູນ ຕ້ອງສົ່ງໃຫ້ ພະແນກບໍລິຫານ ແລະພິທີການ ຫ້ອງການ ກະຊວງແຜນການ ແລະການລົງທຶນ ກ່ອນເວລາ 13:00 ໂມງ ຂອງວັນທີ 28 ກຸມພາ 2025, ຖ້າຊອງປະມູນໃດສົ່ງຊ້າກວ່າເວລາທີ່ກຳນົດໄວ້ ຈະບໍ່ຮັບເອົາ ແລະຈະສົ່ງຄືນໂດຍບໍ່ມີການເປີດຊອງປະມູນ. ກຳນົດເປີດຊອງປະມູນແມ່ນເວລາ 14:00 ໂມງ ຂອງວັນທີ 28 ກຸມພາ 2025, ທີ່ຫ້ອງປະຊຸມ ຊັ້ນ I ຕຶກ 4 ຊັ້ນ ຂອງກະຊວງແຜກການ ແລະການລົງທຶນ;
6. ເອກະສານປະມູນ ຕ້ອງໄດ້ປະກອບໜັງສືຄ້ຳປະກັນການປະມູນມາພ້ອງໃນມູນຄ່າ (ບໍ່ໃຫ້ຫຼຸດ 2% ຂອງມູນຄ່າທີ່ຍື່ນຊອງປະມູນ). ໜັງສືຄ້ຳປະກັນການປະມູນ ຕ້ອງແມ່ນໜັງສືຄ້ຳປະກັນຂອງທະນາຄານ ທີ່ຖືກຕ້ອງກັບແບບຟອມ ທີ່ກຳນົດໄວ້ຢູ່ໃນເອກະສານປະມູນ.

ດັ່ງນັ້ນ, ຈຶ່ງເຊີນມາຍັງທ່ານຜູ້ທີ່ມີຄວາມສົນໃຈ ເຂົ້າຮ່ວມປະມູນຕາມວັນເວລາດັ່ງກ່າວດ້ວຍ.

**ຫົວໜ້າຫ້ອງການ**

ກະຊວງແຜນການແລະການລົງທຶນ ຫ້ອງການ

ອຸຕະແກ້ວ ແກ້ວດວງສີນ